ບໍລິສັດ ອຽງຈັນເຊັນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ (ທົບທວນຄືນ)

ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025

ບໍລິສັດ ອຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເອກະສານລາຍງານການເງິນ (ທີ່ບທວນຄືນ)
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025

ສາລະບານ	**ໜ້າ**
ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານຖານະການເງິນ	1
ໃບລາຍງານຖານະການເງິນ	2 - 3
ໃບລາຍງານຜົນໄດ້ຮັບສັງລວມ	4
ໃບລາຍງານສ່ວນປ່ຽນແປງທຶນ	5
ໃບລາຍງານກະແສເງິນສົດ	6 - 7
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້	8 - 15

ບົດລາຍງານຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນຂໍ້ມູນທາງການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາບໍລິຫານ ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນກາງປີ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ບໍລິສັດ), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນສິ້ນສຸດວັນທີ 30 ມິຖຸນາ 2025, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍ ຂໍ້ມູນທາງການເງິນກາງປີໂດຍຫຍໍ້. ຜູ້ອຳນວຍການ ມີໜ້າທີ່ຮັບຜິດຊອບໃນການກະກຽມຂໍ້ມູນທາງການເງິນກາງປີ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງຖືກອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນກາງປີ ຂໍ້ທີ 2 ຂອງຂໍ້ມູນທາງການເງິນກາງປີສະບັບນີ້. ສ່ວນພວກເຮົາແມ່ນຮັບຜິດຊອບ ໃນການສະຫຼຸບກ່ຽວກັບຂໍ້ມູນທາງການເງິນກາງປີ ດັ່ງກ່າວ ບົນພື້ນຖານການທົບທວນຄືນຂອງພວກເຮົາ.

ຂອບເຂດການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານການທົບທວນຄືນແບບສາກົນ 2410 "ການທົບທວນຄືນຂໍ້ມູນທາງການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະປຽບທຽບຂໍ້ມູນທີ່ກ່ຽວຂ້ອງ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກເຮົາໄດ້. ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມເຫັນ.

ການສະຫຼຸບ

ບົນພື້ນຖານການທົບທວນຄືນຂອງພວກເຮົາ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ເຊື່ອວ່າ ຂໍ້ມູນທາງການເງິນກາງປີຂອງທະນາຄານ, ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືວ່າມີຄວາມສຳຄັນຫຼາຍຕາມນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນ ຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີສະບັບນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ອະພິສິດ ທ່ຽງຕິງພິນໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 7 ສິງຫາ 2025

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 30 ມິຖຸນາ 2025

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	5,320,641,096	2,895,334,895
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ	5	18,362,662,188	12,491,238,900
ຊັບສິນໝຸນວຽນອື່ນໆ		49,193,856	171,401,930
ລວມຊັບສິນໝຸນວຽນ		**23,732,497,140**	**15,557,975,725**
ຊັບສິນບໍ່ໝຸນວຽນ			
ຊັບສິນເພື່ອການລົງທຶນ, ສຸດທິ	6	319,148,413,234	320,496,520,000
ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ	7	57,424,247	91,971,874
ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ	8	6,778,750	20,336,250
ລວມຊັບສິນບໍ່ໝຸນວຽນ		**319,212,616,231**	**320,608,828,124**
ລວມຊັບສິນ		**342,945,113,371**	**336,166,803,849**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 7 ສິງຫາ 2025

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ວັນທີ: 7 ສິງຫາ 2025

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທົບທວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ວັນທີ 30 ມິຖຸນາ 2025

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ	9	13,920,028,233	16,477,552,875
ໜີ້ຕ້ອງສົ່ງທາງອາກອນ		222,442,384	-
ລວມໜີ້ສິນໝຸນວຽນ		**14,142,470,617**	**16,477,552,875**
ໜີ້ສິນບໍ່ໝຸນວຽນ			
ອາກອນໜີ້ສິນເຍື່ອນຊຳລະ	12	37,964,991,400	36,807,966,154
ລວມໜີ້ສິນບໍ່ໝຸນວຽນ		**37,964,991,400**	**36,807,966,154**
ລວມໜີ້ສິນ		**52,107,462,017**	**53,285,519,029**
ທຶນ			
ທຶນຈົດທະບຽນ	10	147,199,900,000	147,199,900,000
ສ່ວນເພີ່ມມູນຄ່າຮຸ້ນ		2,559,995,000	2,559,995,000
ຄັງແຮຕາມລະບຽບການ		6,196,231,071	6,196,231,071
ຄັງແຮເພື່ອຂະຫຍາຍທຸລະກິດ		6,196,231,071	6,196,231,071
ກຳໄລສະສົມ		128,685,294,212	120,728,927,678
ລວມທຶນ		**290,837,651,354**	**282,881,284,820**
ລວມໜີ້ສິນ ແລະ ທຶນ		**342,945,113,371**	**336,166,803,849**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 7 ສິງຫາ 2025

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ວັນທີ: 7 ສິງຫາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບສັງລວມ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ
ລາຍຮັບ		11,655,287,517	9,453,457,585
ລາຍຮັບອື່ນໆຈາກການດຳເນີນງານ		394,496,683	1,318,471,703
ກຳໄລເບື້ອງຕົ້ນ		**12,049,784,200**	**10,771,929,288**
ລາຍຈ່າຍຈາກການດຳເນີນງານ		(5,035,119,379)	(5,884,812,931)
ກຳໄລຈາກການຂາຍຊັບສິນເພື່ອການລົງທຶນ	6	2,919,809,865	-
ກຳໄລຈາກການດຳເນີນງານ		**9,934,474,686**	**4,887,116,357**
ກຳໄລ (ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ		137,358,978	(238,464,536)
ກຳໄລສຸດທິ ກ່ອນຫັກອາກອນກຳໄລ		**10,071,833,664**	**4,648,651,821**
ອາກອນກຳໄລ	12	(1,379,467,630)	(989,989,587)
ກຳໄລສຸດທິສຳລັບໄລຍະ		**8,692,366,034**	**3,658,662,234**
ລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບໄລຍະ ຫັກ ອາກອນ		-	-
ລວມລາຍຮັບ(ລາຍຈ່າຍ)ສັງລວມອື່ນໆສຳລັບໄລຍະ ຫັກອາກອນ		**8,692,366,034**	**3,658,662,234**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	13	59.05	24.86

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 7 ສິງຫາ 2025

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ວັນທີ: 7 ສິງຫາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025

	ບິດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ຄັງແຮຕາມລະບຽບ ການ ກີບ	ຄັງແຮເພື່ອ ຂະຫຍາຍທຸລະກິດ ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫຼືອໃນວັນທີ 1 ມັງກອນ 2024 - ກວດ ສອບ		147,199,900,000	2,559,995,000	4,270,694,472	4,270,694,472	106,060,634,385	264,361,918,329
ຈ່າຍເງິນປັນຜົນ	11	-	-	-	-	(735,999,500)	(735,999,500)
ກຳໄລສຸດທິສຳລັບໄລຍະ		-	-	-	-	3,658,662,234	3,658,662,234
ຍອດເຫຼືອໃນວັນທີ 30 ມິຖຸນາ 2024 - ທີ່ບທວນຄືນ		**147,199,900,000**	**2,559,995,000**	**4,270,694,472**	**4,270,694,472**	**108,983,297,119**	**267,284,581,063**
ຍອດເຫຼືອໃນວັນທີ 1 ມັງກອນ 2025 - ກວດ ສອບ		147,199,900,000	2,559,995,000	6,196,231,071	6,196,231,071	120,728,927,678	282,881,284,820
ຈ່າຍເງິນປັນຜົນ	11	-	-	-	-	(735,999,500)	(735,999,500)
ກຳໄລສຸດທິສຳລັບໄລຍະ		-	-	-	-	8,692,366,034	8,692,366,034
ຍອດເຫຼືອໃນວັນທີ 30 ມິຖຸນາ 2025 - ທີ່ບທວນຄືນ		**147,199,900,000**	**2,559,995,500**	**6,196,231,071**	**6,196,231,071**	**128,685,294,212**	**290,837,651,354**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 7 ສິງຫາ 2025

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ວັນທີ: 7 ສິງຫາ 2025

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025

	ບົດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ
ກະແສເງິນສົດຈາກການກິດຈະກຳການດຳເນີນງານ:			
ກຳໄລກ່ອນຫັກອາກອນກຳໄລສຳລັບໄລຍະ		10,071,833,664	4,648,651,821
ປັບປຸງເພື່ອສົມທຽບກຳໄລສຸດທິກັບເງິນສົດສຸດທິ:			
ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	7,8	48,105,127	48,570,543
ລາຍຮັບດອກເບ້ຍ		(8,007,641)	(6,428,983)
ກຳໄລຈາກການຂາຍຊັບສິນເພື່ອການລົງທຶນ		(2,919,809,865)	-
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		(136,438,231)	260,292,392
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງເງິນທຶນ ໝຸນວຽນ		**7,055,683,054**	**4,951,085,773**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ		(5,772,048,317)	(365,418,518)
ຊັບສິນໝຸນວຽນອື່ນໆ		122,208,074	-
ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ		(2,528,868,145)	825,450,029
ກະແສເງິນສົດທີ່ໃຊ້ໃນ ການດຳເນີນງານ		**(1,123,025,334)**	**5,411,117,284**
ດອກເບ້ຍທີ່ໄດ້ຮັບ		8,007,641	6,428,983
ກະແສເງິນສົດສຸດທິທີ່ໃຊ້ໃນ ກິດຈະກຳການດຳເນີນງານ		**(1,115,017,693)**	**5,417,546,267**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ການໄດ້ມາຂອງຊັບສິນເພື່ອການລົງທຶນ	6	(140,160,000)	(3,771,931,800)
ໄດ້ຮັບເງິນຈາກການຂາຍຊັບສິນເພື່ອການລົງທຶນ		4,408,076,631	-
ເງິນສົດສຸດທິທີ່ເກີດຈາກ ກິດຈະກຳລົງທຶນ		**4,267,916,631**	**(3,771,931,800)**
ກະແສເງິນສົດຈາກ ກິດຈະກຳການເງິນ			
ຈ່າຍເງິນປັນຜົນ	11	(735,999,500)	(735,999,500)
ເງິນສົດສຸດທິໃຊ້ໃນ ກິດຈະກຳທາງການເງິນ		**(735,999,500)**	**(735,999,500)**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 7 ສິງຫາ 2025

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ວັນທີ: 7 ສິງຫາ 2025

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ
ເພີ່ມຂຶ້ນ ສຸດທິໃນເງິນສົດ ແລະ ລາຍການທຽບ ເທົ່າເງິນສົດ		**2,416,899,438**	**909,614,967**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນໄລຍະ	4	2,895,334,895	2,632,929,235
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		8,406,763	274,109,130
ເງິນສົດ ແລະ ລາຍການທຽບເທົ່າເງິນສົດສຳລັບທ້າຍໄລຍະ		**5,320,641,096**	**3,816,653,332**

ທ່ານ ໂຫຼວ ສ່ຽວຕິງ
ຜູ້ຈັດການຝ່າຍການເງິນ

ວັນທີ: 7 ສິງຫາ 2025

ທ່ານ ຫວັ່ງ ເຫວີຍຄຸນ
ຜູ້ອຳນວຍການໃຫຍ່

ວັນທີ: 7 ສິງຫາ 2025

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າ 8 ເຖິງ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນທີ່ບທວນຄືນ ໂດຍຫຍໍ້.

1. ຂໍ້ມູນທົ່ວໄປ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ("ບໍລິສັດ") ເປັນບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງໄດ້ດຳເນີນງານ ແລະ ຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈັດຕັ້ງ ແລະ ຈົດທະບຽນພາຍໃຕ້ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ, ລົງວັນທີ 30 ພະຈິກ 2017 ແລະ ໄດ້ມີການຕໍ່ໃບທະບຽນວິສາຫະກິດສະບັບໃໝ່, ລົງວັນທີ 26 ພຶດສະພາ 2022.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ຖະໜົນຄຸວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນເພື່ອພັດທະນາ ແລະ ໃຫ້ເຊົ່າສູນການຄ້າ ແລະ ຫ້ອງການ.

ເອກະສານລາຍງານການເງິນທີ່ບທວນຄືນ ສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຄະນະຜູ້ອຳນວຍການ ໃນວັນທີ 7 ສິງຫາ 2025.

2. ພື້ນຖານກະກຽມ

ເອກະສານລາຍງານທາງການເງິນທີ່ບທວນຄືນໄດ້ຖືກສ້າງຂຶ້ນສອດຄ່ອງກັບນະໂຍບາຍການບັນຊີຂອງ ບໍລິສັດທີ່ໄດ້ອະທິບາຍລາຍລະອຽດຕ່າງໆຢູ່ໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2024. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ເປັນຕົ້ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ໃບລາຍງານກະແສເງິນສົດ) ແມ່ນຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການເປີດເຜີຍຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຮ່ວມກັບບົດລາຍງານການເງິນປະຈຳປີສິ້ນສຸດ 31 ທັນວາ 2024.

3. ການຄາດຄະເນ

ການສ້າງເອກະສານລາຍງານການເງິນທວນຄືນ ແມ່ນຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ, ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລ່າຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການສ້າງເອກະສານລາຍງານການເງິນທວນຄືນ ຜູ້ບໍລິຫານມີການຕັດສິນໃຈໃນການນຳໃຊ້ນະໂຍບາຍການບັນຊີຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານທາງການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ເງິນສົດໃນມື	23,998,368	-
ເງິນສົດໃນທະນາຄານ	5,296,642,728	2,895,334,895
	5,320,641,096	**2,895,334,895**

5. ໜີ້ຕ້ອງຮັບທາງການຄ້າ ແລະ ອື່ນໆ, ສຸດທິ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ສາມ	1,300,880,522	879,839,816
ຫັກ: ສຳຮອງບັນຊີໜີ້ສົງໄສຈະເສຍ	(465,225,832)	(465,225,832)
	835,654,690	**414,613,984**
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	15,724,079,552	11,139,410,389
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	1,802,927,946	937,214,527
	18,362,662,188	**12,491,238,900**

6. ຊັບສິນເພື່ອການລົງທຶນ, ສຸດທິ

	ກີບ
ວັນທີ 1 ມັງກອນ 2025 – ກວດສອບ	320,496,520,000
ເພີ່ມຂຶ້ນ	140,160,000
ຂາຍ*	(1,488,266,766)
ກຳໄລ/ຂາດທຶນ ຈາກການຕີມູນຄ່າຄືນໃໝ່	-
ມູນຄ່າຍັງເຫຼືອຕາມບັນຊີສຸດທິ ໃນວັນທີ 30 ມິຖຸນາ 2025 – ທີ່ບທວນຄືນ	**319,148,413,234**

*ໃນລະຫວ່າງຫົກເດືອນຕົ້ນປີ, ສິ້ນສຸດວັນທີ 30 ມິຖຸນາ 2025, ບໍລິສັດໄດ້ຂາຍຊັບສິນເພື່ອການລົງທຶນ ທີ່ມີເນື້ອທີ່ 83.37 ຕາແມັດ. ມູນຄ່າຕາມບັນຊີຂອງຊັບສິນເພື່ອການລົງທຶນໃນເວລາຂາຍນັ້ນແມ່ນ 1,488,266,766 ກີບ. ລາຄາຂາຍສຸດທິແມ່ນ 4,408,076,631 ກີບ. ນີ້ເຮັດໃຫ້ມີກຳໄລຈາກການຂາຍຈຳນວນ 2,919,809,865 ກີບ ທີ່ສະແດງໃນໃບລາຍງານຜົນໄດ້ຮັບສັງລວມ.

7. ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ

	ກີບ
ວັນທີ 1 ມັງກອນ 2025 – ກວດສອບ	91,971,874
ຄ່າຫຼ້ຍຫ້ຽນ	(34,547,627)
ມູນຄ່າຍັງເຫຼືອຕາມບັນຊີສຸດທ້າ ໃນວັນທີ 30 ມິຖຸນາ 2025 - ທົບທວນຄືນ	**57,424,247**

8. ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ

	ກີບ
ວັນທີ 1 ມັງກອນ 2025 – ກວດສອບ	20,336,250
ຫັກຄ່າເສື່ອມ	(13,557,500)
ມູນຄ່າຍັງເຫຼືອຕາມບັນຊີສຸດທ້າ ໃນວັນທີ 30 ມິຖຸນາ 2025 – ທົບທວນຄືນ	**6,778,750**

9. ໜີ້ຕ້ອງສົ່ງທາງການຄ້າ ແລະ ອື່ນໆ

	ທົບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ລາຍຮັບລ່ວງໜ້າຈາກຜູ້ເຊົ່າ**	6,956,006,834	9,755,584,726
ເງິນມັດຈຳຈາກຜູ້ເຊົ່າ*	5,472,556,419	5,252,143,882
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 15.2)	872,915,459	791,357,132
ໜີ້ຕ້ອງສົ່ງອື່ນໆ	618,549,521	678,467,135
	13,920,028,233	**16,477,552,875**

*ເງິນມັດຈຳຈະຖືກສົ່ງຄືນໃຫ້ຫຼັງຈາກສິ້ນສຸດສັນຍາ

**ລາຍຮັບລ່ວງໜ້າຈາກຜູ້ເຊົ່າ ໝາຍເຖິງ ຄ່າເຊົ່າທີ່ເຈົ້າຂອງຊັບສິນໄດ້ຮັບລ່ວງໜ້າ ສຳລັບການບໍລິການ ຫຼື ການເຊົ່າ ແລະ ຈະຖືກຮັບຮູ້ຕາມໄລຍະຂອງສັນຍາ.

10. ທຶນຈົດທະບຽນ

ບໍ່ມີການເຄື່ອນໄຫວຫຼຸດ ຫຼື ອອກຮຸ້ນເພີ່ມສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025.

11. ເງິນປັນຜົນ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 09 ພຶດສະພາ 2025, ຄະນະອຳນວຍການໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ຈຳນວນ 5 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 735,999,500 ກີບ. ເງິນປັນຜົນຖືກຈ່າຍໃນວັນທີ 28 ພຶດສະພາ 2025.

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຈັດຂຶ້ນໃນວັນທີ 29 ເມສາ 2024, ຄະນະອຳນວຍການໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023 ຈຳນວນ 5 ກີບຕໍ່ຮຸ້ນ, ລວມເປັນເງິນທັງໝົດ 735,999,500 ກີບ. ເງິນປັນຜົນຖືກຈ່າຍໃນວັນທີ 29 ພຶດສະພາ 2024

12. ລາຍຮັບອື່ນໆຈາກການດຳເນີນງານ

	ທີ່ບທອນຄືນ 30 ມິຖຸນາ 2025 ກີບ	ທີ່ບທອນຄືນ 30 ມິຖຸນາ 2024 ກີບ
ລາຍໄດ້ຈາກພື້ນທີ່ຈັດງານ*	123,303,368	718,559,851
ລາຍໄດ້ຈາກປ້າຍໂຄສະນາ**	263,185,674	593,482,869
ລາຍຮັບຈາກດອກເບ້ຍ	8,007,641	6,428,983
	394,496,683	**1,318,471,703**

*ລາຍໄດ້ຈາກການເຊົ່າຫ້ອງຈັດງານແມ່ນເປັນລາຍຮັບທີ່ມາຈາກການໃຫ້ເຊົ່າພື້ນທີ່ເພື່ອຈັດງານຕ່າງໆເຊັ່ນ: ງານເທດສະການອາຫານ, ກິດຈະກຳສາທາລະນະ ຫຼື ການໂຄສະນາອື່ນໆ.

**ລາຍໄດ້ຈາກປ້າຍໂຄສະນາເປັນລາຍໄດ້ຈາກການໂຄສະນາເທິງປ້າຍໂຄສະນາຕາມໄລຍະເວລາຂອງສັນຍາ.

13. ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	ທີ່ບທອນຄືນ 30 ມິຖຸນາ 2025 ກີບ	ທີ່ບທອນຄືນ 30 ມິຖຸນາ 2024 ກີບ
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	(222,442,384)	-
ລາຍຈ່າຍອາກອນເຍື້ອນຊຳລະ (13.2)	(1,157,025,246)	(989,989,587)
ລວມລາຍຈ່າຍອາກອນພາຍໃນໄລຍະ	**(1,379,467,630)**	**(989,989,587)**

13. ລາຍຈ່າຍອາກອນກຳໄລ (ຕໍ່)

13.1 ລາຍຈ່າຍອາກອນກຳໄລ

ບໍລິສັດມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% (2024: 20%) ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

ການຄິດໄລ່ຂອງອາກອນກຳໄລສຳລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025 ແມ່ນມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ
ກຳໄລກ່ອນອາກອນ	**10,071,833,664**	**4,648,651,821**
ຜົນກະທົບຈາກອາກອນ		
ຜົນກະທົບຈາກອາກອນລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	10,350,310	781,652,213
ຜົນກະທົບຈາກອາກອນຂອງລາຍຮັບທີ່ຍົກເວັ້ນອາກອນກຳໄລ	(5,795,476,540)	(5,471,307,758)
ພື້ນຖານກຳໄລກ່ອນອາກອນ ກ່ອນຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	**4,286,707,434**	**(41,003,724)**
ຂາດທຶນອາກອນຍົກຍອດໄປຫັກຕໍ່ (ບົດອະທິບາຍຂໍ້ 13.3)	(3,174,495,513)	-
ພື້ນຖານກຳໄລກ່ອນອາກອນ ຫຼັງຫັກຂາດທຶນອາກອນຍົກຍອດໄປຫັກຕໍ່	**1,112,211,921**	-
ອັດຕາອາກອນກຳໄລ	20%	20%
ລາຍຈ່າຍອາກອນກຳໄລ	**222,442,384**	-

13.2 ໜີ້ອາກອນເຍື້ອນຊຳລະ

ການເຄື່ອນໄຫວລວມຂອງໜີ້ສິນອາກອນເຍື້ອນຊຳລະສຳລັບໄລຍະ6ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2025 ແມ່ນມີດັ່ງຕໍ່ໄປນີ້:

	2025 ກີບ	2024 ກີບ
ໃນວັນທີ 01 ມັງກອນ	36,807,966,154	32,269,440,837
ບັນທຶກເຂົ້າກຳໄລ ຫຼື ຂາດທຶນ	1,157,025,246	989,989,587
ໃນວັນທີ 30 ມິຖຸນາ	**37,964,991,400**	**33,259,430,424**

13. ລາຍຈ່າຍອາກອນກຳໄລ (ຕໍ່)

13.2 ໜີ້ອາກອນເຍື້ອນຊຳລະ (ຕໍ່)

ການເຄື່ອນໄຫວຂອງໜີ້ສິນອາກອນເຍື້ອນຊຳລະພາຍໃນປີ ແລະ ປີກ່ອນມີດັ່ງລຸ່ມນີ້:

	ໃນວັນທີ 31 ທັນວາ 2024 ກີບ	ບັນທຶກ ເຂົ້າກຳໄລ ຫຼື ຂາດທຶນ ກີບ	ໃນວັນທີ 30 ມິຖຸນາ 2025 ກີບ
ຄ່າເສື່ອມມູນຄ່າຈາກການປະເມີນມູນຄ່າ ຊັບສິນ ການລົງທຶນ	12,867,828,226	1,129,737,600	13,997,565,826
ກຳໄລຈາກການປະເມີນມູນຄ່າຊັບສິນການລົງທຶນ	23,918,402,721	-	23,918,402,721
ອື່ນໆ*	21,735,207	27,287,646	49,022,853
	36,807,966,154	**1,157,025,246**	**37,964,991,400**

* ສ່ວນໃຫຍ່ແມ່ນມາຈາກກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ.

13.3 ຂາດທຶນອາກອນຍົກຍອດໄປຫັກຕໍ່

ອີງຕາມກົດໝາຍອາກອນສະບັບແກ້ໄຂເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019, ທີ່ມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020, ມາດຕາ 23, *ຜູ້ດຳເນີນທຸລະກິດ ທີ່ເສຍອາກອນກຳໄລຕາມລະບົບການຖືບັນຊີທີ່ມີການຂາດທຶນໃນປີ ໂດຍມີການຢັ້ງຢືນຈາກອົງການການກວດສອບບັນຊີ ຫຼື ບໍລິສັດກວດສອບບັນຊີເອກະລາດ ແລະ ໄດ້ມີການຮັບຮູ້ຈາກຂະແໜງສ່ວຍສາອາກອນ ມີສິດຍົກເງິນຂາດທຶນດັ່ງກ່າວ ໄປຫັກອອກຈາກກຳໄລຂອງປີຖັດໄປ ພາຍໃນເວລາຫ້າປີ.* ໃນວັນທີ 31 ທັນວາ 2024, ບໍລິສັດມີຂາດທຶນອາກອນຍົກຍອດໄປຫັກຕໍ່ສະສົມລວມທີ່ສາມາດຫັກລົບກັບກຳໄລທາງອາກອນໃນອະນາຄົດດັ່ງລາຍລະອຽດລຸ່ມນີ້:

ປີເລີ່ມຕົ້ນ	ສາມາດໃຊ້ໄດ້ ເຖິງ	ຂາດທຶນອາກອນ ກີບ	ສາມາດໃຊ້ໄດ້ເຖິງ 30 ມິຖຸນາ 2025 ກີບ	ເສຍສິດ ກີບ	ສາມາດໃຊ້ໄດ້ເຖິງ ວັນທີ 30 ມິຖຸນາ 2025 ກີບ
2021*	2026	3,174,495,513	(3,174,495,513)	-	-
		3,174,495,513	**(3,174,495,513)**	**-**	**-**

*ຂາດທຶນອາກອນຍົກຍອດໄປຫັກຕໍ່ສຳລັບປີສິ້ນສຸດ 31 ທັນວາ 2021 ໄດ້ຖືກປະເມີນຈາກຂະແໜງສ່ວຍສາອາກອນ ໃນວັນທີ 27 ມັງກອນ 2023.

14. ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງກຳໄລສຸດທິໃຫ້ຜູ້ຖືຮຸ້ນ ດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນທີ່ອອກພາຍໃນໄລຍະ.

	ທີ່ບທວນຄືນ 30 ມິຖຸນາ 2025	ທີ່ບທວນຄືນ 30 ມິຖຸນາ 2024
ກຳໄລ ສຸດທິຂອງຜູ້ຖືຮຸ້ນ (ກີບ)	8,692,366,034	3,658,662,234
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັງໝົດ (ຮຸ້ນ)	147,199,900	147,199,900
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	59.05	24.86

15. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄອບຄຸມຂອງ ບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນເຫຼົ່ານັ້ນ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນດັ່ງຕໍ່ໄປນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ:

15.1. ການຊື້ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ທີ່ບທວນຄືນ 30 ມິຖຸນາ 2024 ກີບ
ຊື້ບໍລິການຈາກ:		
ບໍລິສັດແມ່		
- ຄ່າບໍລິຫານຈັດການ	2,250,000,000	2,275,488,530
- ຄ່າບຳລຸງຮັກສາ	1,703,945,308	1,792,681,578

15.2. ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ/ຊື້ບໍລິການ

	ທີ່ບທວນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ໜີ້ຕ້ອງຮັບທາງການຄ້າ:		
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 5)	15,724,079,552	11,139,410,389
ເງິນລ່ວງໜ້າພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 5)	1,802,927,946	937,214,527
ໜີ້ຕ້ອງສົ່ງທາງການຄ້າ:		
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 9)	872,915,459	791,357,132

16. ພາລະຜູກພັນ

ຜູ້ໃຫ້ເຊົ່າ

ບໍລິສັດໄດ້ໃຫ້ເຊົ່າພື້ນທີ່ຮ້ານຄ້າຍ່ອຍ ແລະ ຫ້ອງການ ພາຍໃຕ້ຂໍ້ຕົກລົງການເຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຈາກຄ່າເຊົ່າຂັ້ນຕ່ຳ ໃນອະນາຄົດ ນະວັນທີ 30 ມິຖຸນາ 2025 ແລະ 31 ທັນວາ 2024 ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງນີ້:

	ທີ່ບທອນຄືນ 30 ມິຖຸນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ຕ່ຳກວ່າ 1 ປີ	8,898,173,702	16,151,087,747
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	12,477,632,448	14,205,024,096
	21,375,806,150	**30,356,111,843**

ພາລະຜູກພັນພາຍໃຕ້ສັນຍາຮ່ວມມືທຸລະກິດ

ບໍລິສັດໄດ້ເຊັນສັນຍາໃນການຮ່ວມມືທຸລະກິດ ເຊິ່ງໃນນັ້ນລາຍຮັບຈາກການດຳເນີນງານຂອງໂຮງໜັງ ທີ່ຖືກກຳນົດໃນອັດຕາຄົງທີ່ໄວ້ ໃນສັນຍາດັ່ງກ່າວ ຄູ່ຮ່ວມທຸລະກິດເຊິ່ງເປັນຜູ້ເຊົ່າ ຕ້ອງແບ່ງລາຍຮັບຈາກລາຍໄດ້ຂອງໂຮງໜັງໃຫ້ແກ່ບໍລິສັດ ນັບຈາກ ທັນວາ 2017 ຫາ ສິງຫາ 2035 ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

(i) ແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ໃນອັດຕາ 12% ແລະ (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະ ຂອງທີ່ລະນຶກ ໃນອັດຕາ 15%. ໃນລະຫວ່າງ 01 ກຸມພາ 2024 ຫາ 28 ກຸມພາ 2025 ແລະ ໃນລະຫວ່າງ 01 ພຶດສະພາ ຫາ 30 ຕຸລາ 2025, ທາງຜູ້ບໍລິຫານໄດ້ເຫັນດີຫຼຸດເປີເຊັນຂອງການແບ່ງສ່ວນລາຍຮັບຈາກການຂາຍປີ້ໜັງ ຈາກ 12% ເປັນ 8% ແລະ (ii) ແບ່ງສ່ວນລາຍຮັບຈາກການຂາຍອາຫານ, ເຄື່ອງດື່ມ ແລະຂອງທີ່ລະນຶກຈາກ 15% ເປັນ 10%.

ບໍລິສັດບໍ່ມີສິດຍົກເລີກສັນຍາຮ່ວມມືທຸລະກິດກ່ອນຄົບກຳນົດສັນຍາເຊົ່າ, ເວັ້ນເສຍແຕ່ (i) ມີການລະເມີດອັນຮ້າຍແຮງໂດຍຜູ້ເຊົ່າ; ຫຼື (ii) ມີເຫດສຸດວິໄສ; ຫຼື (iii) ຝ່າຍໃດຝ່າຍໜຶ່ງຍື່ນຟ້ອງລົ້ມລະລາຍ ຫຼື ບໍ່ສາມາດຊຳລະຕໍ່ໜີ້ສິນໄດ້.

17. ເຫດການທີ່ເກີດຂຶ້ນຫຼັງວັນທີເອກະສານລາຍງານທາງການເງິນ

ບໍ່ມີເຫດການສາລະສຳຄັນ ເກີດຂຶ້ນຫຼັງຈາກວັນທີເອກະສານລາຍງານການເງິນ ທີ່ມີຜົນກະທົບຕໍ່ຕົວເລກໃນຂໍ້ມູນການເງິນຂອງ ບໍລິສັດ.